# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 31 ສິງຫາ 2008 ( 08-31-2008 )

# <u>ຊີວິດທີ່ໝັ້ນຄົງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ເຮັບເຣີ 12:1-15

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າເດີນທາງຊີວິດຄຣິສຕຽນຂອງຂ້າພະເຈົ້າໃຫ້ໝັ້ນຄົງຫລາຍຂຶ້ນຢ່າງໃດ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຜູ້ທີ່ເຊື່ອທັງຫລາຍສາມາດໝັ້ນຄົງຢູ່ໃນການເດີນທາງຊີວິດຄຣິສຕຽນຂອງເຂົາເຈົ້າໄດ້ຫລາຍຂຶ້ນໃນເມື່ອເຂົາເຈົ້າຫາກເອົາສິ່ງທີ່ຂັດຂວາງອອກ, ແລ້ວຍອມຮັບການການຕີສອນຂອງພຣະເຈົ້າ ແລະເອົາຄວາມເຊື່ອປະກອບການປະຕິບັດຂອງເຂົາເຈົ້າ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍໃຫ້ທ່ານຮັບເອົາຄວາມດີຂອງພຣະເຈົ້າໃນການດຳຣົງຊີວິດປະຈຳວັນຂອງທ່ານໂດຍ:

- ການຄົ້ນພົບບາດກ້າວທີ່ທ່ານສາມາດໝັ້ນໃຈໄດ້ໃນການເດີນທາງຊີວິດຄຣິສຕຽນຂອງທ່ານ, ແລະ
- ການຕັດສິນໃຈຢ່າງໝັ້ນຄົງໃນການເດີນທາງຊີວິດຄຣິສຕຽນຂອງທ່ານຂຶ້ນຕື່ມ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ນຳພານັກຮຽນໃຫ້ມີຄວາມສົນໃຈຕໍ່ຊີວິດໃຫ້ດີທີ່ສຸດ. ໃຫ້ບອກກັບນັກຮຽນວ່າການສຶກສາພຣະທັມເຮັບເຣີເຮັດໃຫ້ຜູ້ທີ່ເຊື່ອຊອກສແວງຫາການຈົດຈໍ່ຢູ່ທີ່ພຣະເຢຊູເພື່ອໃຫ້ຮູ້ຈັກການດຳເນີນຊີວິດທີ່ດີທີ່ສຸດ. ໃນອາທິດນີ້ເຂົາເຈົ້າຈະໄດ້ຮຽນວ່າເຮັດແນວໃດຈຶ່ງຈະດຳເນີນຊີວິດຄຣິສຕຽນຢ່າງສະໝ່ຳສເມີໄດ້.
- ບົດຮຽນໃນມື້ນີ້ໃຫ້ປ່ຽນແປງໂດຍການເວົ້າ: ບາງເທື່ອຜູ້ໃຫຍ່ຂອງພວກເຮົາກໍເຕີບໃຫຍ່ທາງຝ່າຍຈິດວິນຍານ

ຊ້າ ແຕ່ມີບາງຄົນກໍຈະເຣີນຂຶ້ນໄວ, ແຕ່ຜູ້ທີ່ມີຄວາມໝັ້ນໃຈເດີນຕາມພຣະເຈົ້າທຸກວັນ, ຜູ້ທີ່ຈົດຈໍ່ຢູ່ໃນພຣະເຢຊູ ຈະມີຄວາມຈະເຣີນຂຶ້ນທາງດ້ານຄວາມເຊື່ອຂຶ້ນໄປເລື້ອຍໆ.

1. <u>ເອົາສິ່ງທີ່ຖ່ວງດຶງອອກ:</u> (ເຮັບເຣີ 12:1-4)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ເຮັບເຣີ 12:1-4
- ໃຫ້ນັກຮຽນເປີດໄປເບິ່ງບົດຮຽນຂອງເຂົາເຈົ້າທີ່ຢາຍໃຫ້ເບິ່ງຄຳທີ່ວ່າ "ການແລ່ນແຂ່ງ". ໃຫ້ຜູ້ນຶ່ງອາສາ ສມັກອ່ານຄຳເວົ້າໃນບົດຮຽນນີ້: ຊຶ່ງບໍ່ພຽງແຕ່ເກີດຂຶ້ນແກ່ຜູ້ທີ່ໄປກ່ອນພວກເຮົາ, ແຕ່ພວກເຮົາຄວນຈະ ປາຖນາໃຫ້ສຳເຣັດໃນການແຂ່ງຂັນເໝືອນກັນ ພວກເຮົາກໍຄວນໃຫ້ຄົນລຸ້ນຫລັງສືບຕໍ່ໃນດ້ວຍຄວາມເຊື່ອ ດ້ວຍເໝືອນກັນ.
- ເພື່ອຈະຊີ້ໃຫ້ເຫັນຄວາມຍິ່ງໃຫຍ່ຂອງຄຳພຍານ" (ຂໍ້ທີ 1" ໄດ້ສະແດງເຖີງຄວາມດີເດັ່ນຂອງຄວາມເຊື່ອ ຂອງຜູ້ທີ່ໄດ້ອອກໄປກ່ອນໜ້າຂອງພວກເຮົາ. ໃນຊ່ວງນີ້ໄດ້ສະທ້ອນໃຫ້ເຫັນລັກສະນະທີ່ເລັງເຖີງຜູ້ທີ່ ທີ່ດີເດັ່ນໃນສມັຍພຣະຄັມພີເດີມ. ມີຜູ້ໃຫຍ່ຫລາຍຄົນມີຄຳພຍານດີໆ ໃນຕົວຂອງເຂົາເຈົ້າເອງໂດຍສະເພາະ ຜູ້ທີ່ເປັນຄຣິສຕຽນທີ່ເຂັ້ມແຂງ ແລະຜູ້ທີ່ຝຶກຝົນດຳເນີນໄປເລື້ອຍໆ ດ້ວຍຄວາມໝັ້ນໃຈ ສົມກັບເອີ້ນວ່າ ເປັນຄຣິສຕຽນ. ໃຫ້ນັກຮຽນບອກເຖີງວິຣະບຸຣຸດທີ່ມີຄວາມເຊື່ອເຂັ້ມແຂງມາຈັກ 1-3 ຄົນ ຫລືຈະເວົ້າ ເຣື່ອງຄວາມເຊື່ອສ່ວນຕົວກໍໄດ້.
- ວິຈັຍເບິ່ງວ່າສາເຫດອັນໃດທີ່ພາໃຫ້ແລ່ນໄດ້ດີ. ນັກແລ່ນທັງຫລາຍໄດ້ສະລະຖິ້ມທຸກຢ່າງທີ່ເປັນການ ຖ່ວງດຶງຂັດຂວາງທີ່ຈະເຮັດໃຫ້ເຂົາແລ່ນຍາກນັ້ນອອກ.
- ຂໍໃຫ້ນັກຮຽນຂຽນວ່າມີຫຍັງແດ່ທີ່ກົດໜ່ວງຫນ່ຽວຖ່ວງດຶງຄວາມຈະເຣີນກ້າວໜ້າຂອງຄຣິສ ຕຽນໄວ້ເຊັ່ນ: ໄດ້ເຮັດວຽກງານດີ, ກຽດຕິຍົດ, ຄວາມດີຂອງຕົນເອງພໍແລ້ວ ແລະອື່ນໆ.......

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 12:1-4)
1. ຜູ້ໄດ້ເປັນພຍານແກ່ພວກເຮົາຢ່າງຫລວງຫລາຍແລ້ວນັ້ນມີໃຜແດ່?
2. ມີສິ່ງໃດແດ່ທີ່ຖ່ວງດຶງບໍ່ໃຫ້ຄຣິສຕຽນເຕີບໃຫຍ່ແລະເຮັດການແລ່ນແຂ່ງໄດ້ຊັກຊ້າລົງ?
3. ອົງພຣະເຢຊູຄຣິດເຈົ້າໄດ້ເປັນແບບຢ່າງທີ່ດີໃຫ້ຄຣິສຕຽນທັງຫລາຍໄດ້ຕິດຕາມນັ້ນມີອັນໃດແດ່?

2. <u>ຍອມຮັບການຕີສອນ:</u> (ເຮັບເຣີ 12:5-11)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 12:5-11
- ຖາມນັກຮຽນ ຖ້າເຂົາເຈົ້າຈື່ໄດ້ ຕອນທີແຣກ ທີ່ເຂົາເຈົ້າໄດ້ຖືກພໍ່ແມ່ຕີສອນຊຶ່ງເຮັດໃຫ້ເປັນໜ້າສັງເກດ ຄວາາມແຕກຕ່າງໃນການດຳຣົງຊີວິດຂອງເຂົາເຈົ້າ ຫລື (2)ອັນຍາກທີ່ສຸດທີ່ຈະອອກຈາກ ປະຖິ້ມບາງ ສິ່ງບາງຢ່າງທີ່ດີໃຫ້ຫັນມາດຳຣົງຊີວິດທີ່ດີທີ່ສຸດແລະກໍຍາກໃນການທີ່ຈະບຸກບືນໄປເຖີງຈຸດໄດ້
- ຖາມນັກຮຽນໃນຖານະທີ່ເຂົາເຈົ້າເປັນຜູ້ໃຫຍ່ແລ້ວ, ຖ້າເຂົາເຈົ້າເຄີຍຄິດວ່າເຂົາເຈົ້າບໍ່ເຄີຍພົບກັບຄວາມ ຫຍຸ້ງຍາກໃນຊີວິດຂອງເຂົາເຈົ້າໃນການຕີສອນຂອງພຣະເຈົ້າເດ.
- ຂໍ້ສເນີ ໃນເມື່ອຜູ້ໃຫຍ່ເຈີກັບສິ່ງອັນຕະລາຍ ແລະເວລາສຸກສະບາຍແລ້ວ, ຖ້າຫາກເຂົາເຈົ້າຖືກການຕີສອນ ຈາກພຣະເຈົ້າແລ້ວ, ເຂົາເຈົ້າໄດ້ເຄີຍຖາມຕົວເຂົາເຈົ້າເອງວ່າ: ຂ້າພະເຈົ້າໄດ້ເຮັດຜິດບາບ ຫລືຂັດຂວາງ ຕໍ່ຊີວິດຂອງຂ້າພະເຈົ້າເອງບໍ່? ຖ້າເປັນເຊັ່ນນັ້ນ ເຂົາເຈົ້າໄດ້ສາຣະພາບ ແລະຍອມຮັບການຕີສອນຫລືບໍ່?

ຖ້າເຂົາເຈົ້າບໍ່ສາມາດສາຣະພາບບາບ, ເຂົາເຈົ້າກໍສາມາດທີ່ຈະທູນຂໍໃຫ້ພຣະເຈົ້າເຈົ້າຊ່ວຍ
ໃຫ້ຈະເຣີນເຕີບໃຫຍ່ຜ່ານພົ້ນອັນຕະລາຍໂດຍການໄວ້ວາງໃຈໃນພຣະອົງໄດ້.
ນຳພານັກຮຽນໃນການປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງຂອງການຕີສອນຂອງພຣະເຈົ້າກັບການ
ຕີສອນຂອງພໍ່ຂອງພວກເຮົາ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 12:5-11)

1. ແມ່ນຫຍັງທີ່ເປັນສິ່ງທີ່ອ້າງເຖິງພຣະທັມສຸພາສິດທີ່ເປັນການຕີສອນບັນດາຜູ້ທີ່ເຊື່ອທັງຫລາຍ ໃນເຣື່ອງການຕີສອນ?
2. ການຕີສອນຂອງພຣະເຈົ້າໄດ້ສະແດງເຖິງຄວາມຮັກຢ່າງໃດ?
3. ຄຣິສຕຽນຄວນຈະຕອບສນອງຕໍ່ການຕີສອນນັ້ນຢ່າງໃດ?
4. ການຕີສອນໄດ້ນຳໄປເຖິງສັນຕິສຸກ ແລະຂອບທັມແນວໃດ?

## 3. <u>ເອົາຄວາມເຊື່ອປະກອບການປະຕິບັດ:</u> (ເຮັບເຣີ 12:12-15)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 12:12-15
- ໃຫ້ນັກຮຽນຕິດຕາມອ່ານບົດຮຽນ ແລ້ວຂີດກ້ອງ ຫລືຂີດວົງອ້ອມຄຳສຳຄັນທີ່ປະກົດເຫັນຢູ່ໃນນີ້ມີ ສີ່ ຢ່າງດ້ວຍກັນທີ່ຮຽກຮ້ອງໃຫ້ຜູ້ທີ່ເຊື່ອທັງຫລາຍມີຄວາມແນ່ນອນໃຈ ແລະໝູນໃຈ.
- ຖາມນັກຮຽນວ່າ: ເຂົາເຈົ້າໄດ້ເຮັດແນວໃດໃນເມື່ອເຂົາເຈົ້າອິດເມື່ອຍ, ບາງເທື່ອກໍແມ່ນຄວາມຫຍຸ້ງຍາກ ເຮັດໃຫ້ອິດເມື່ອຍ, ມີບັນຫາຫລາຍເຫລືອບ່າກວ່າແຮງທາງດ້ານຮ່າງກາຍເຮັດໃຫ້ອິດເມື່ອຍ. ແລ້ວກໍຊື່ ຄືນນັ້ນບາງເທື່ອກໍແມ່ນຈິດວິນຍານເຮັດໃຫ້ເມື່ອຍກໍມີ.
- ຜູ້ຂຽນໄດ້ຂໍຮ້ອງຜູ້ຟັງຂອງລາວໃຫ້ປະຕິບັດຕາມຢ່າງສັນຕິສຸກ ແລະຢ່າງບໍຣິສຸດ (ຂໍ້ 14).

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 12:12-15)

1. ເປັນເພາະເຫດໃດຜູ້ຂຽນຈຶ່ງເນັ້ນໝັກໃສ່ມື ແລະຫົວເຂົ່າເປັນການສະແດງໃຫ້ເຫັນເຖິງຄວາມເມື່ອຍ?
2. ດ້ວຍເຫດໃດຄຣິສຕຽນຈຶ່ງສົມຄວນປະຕິບັດຕາມຢ່າງສັນຕິສຸກ ແລະບໍຣິສຸດ?
3. ແມ່ນຫຍັງທີ່ເປັນອັນຕະລາຍຂອງການລົ້ມລົງກ່ອນສຳເຣັດ ຫລືກາຍເປັນຜູ້ນ້ອຍ? (ບໍ່ເຕີບໃຫຍ່)

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ບັນດາຜູ້ທີ່ເຊື່ອທັງຫລາຍຕ້ອງການທີ່ຈະຕ້ອງຖອດຖິ້ມທຸກສິ່ງຢ່າງທີ່ເປັນການຖ່ວງດຶງຂັດຂວາງຈາກ ການດຳຣົງຊີວິດຄຣິສຕຽນ.
- ຜູ້ທີ່ເຊື່ອທັງຫລາຍຄວນຈະຄຳນຶງເບິ່ງຄວາມຍາກລຳບາກ ເພື່ອໃຫ້ມີໂອກາດຈະເຣີນຂຶ້ນໃນຄວາມບໍຣິສຸດ.
- ເອົາຄວາມເຊື່ອປະກອບກັບການປະຕິບັດ ເພື່ອຊ່ວຍໃຫ້ຜູ້ທີ່ເຊື່ອມີຄວາມແນ່ນອນໃຈໃນການດຳຣົງຊີວິດ ຄຣິສຕຽນດີຂຶ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH